ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງອັດຕະປື ອັດຕະປື, ວັນທີ.16...5...2017

# ບົດບັນທຶກ

## ກອງປະຊຸມອົງການປົກຄອງແຂວງ ປະຈຳເດືອນ 4 ປີ 2017

ກອງປະຊຸມໄດ້ດຳເນີນໃນຕອນເຊົ້າ ເວລາ 08:00 ໂມງ ຂອງວັນທີ 12/5/2017 ທີ່ຫ້ອງປະຊຸມສຳນັກງານອົງການປົກຄອງແຂວງ, ໂດຍພາຍໃຕ້ການເປັນປະທານຂອງທ່ານ ປອ ນາມ ວິຍະເກດ ກຳມະການສູນກາງພັກ, ເລຂາພັກແຂວງ-ເຈົ້າແຂວງໆອັດຕະປື ແລະ ມີບັນດາທ່ານຮອງເຈົ້າແຂວງ, ຫົວໜ້າ-ຮອງພະແນກການ, ຫົວໜ້າກອງບັນຊາການ ປກຊ-ປກສ ແຂວງ, ຄະນະຄຸ້ມຄອງດ່ານສາກົນພູເກືອ, ກອງກວດກາພາສີປະຈຳແຂວງ, ຄະນະຫ້ອງວ່າການແຂວງ ແລະ ກອງເລຂາຈຳນວນໜຶ່ງ ເຂົ້າຮ່ວມທັງໝົດ 38 ຄົນ, ຍິງ 3 ຄົນ (ຍົກເວັ້ນບັນດາເຈົ້າເມືອງ, ສະພາປະຊາຊົນແຂວງ).

I. **ຈຸດປະສົງຂອງກອງປະຊຸມ:**

ເພື່ອປະຕິບັດຕາມ ມາດຕາ 22 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນສະບັບເລກທີ 68/ສພຊ, ລົງວັນທີ 14/12/2015.

II. **ວາລະກອງປະຊຸມ:**

ກອງປະຊຸມໄດ້ຮັບຟັງບົດສະຫຼຸບລາຍງານ ໃນ 7 ຫົວຂໍ້ໃຫຍ່ຄື: 1). ການຈັດຕັ້ງປະຕິບັດວຽກງານອົງການປົກຄອງແຂວງໄລຍະ 3 ເດືອນຕົ້ນປີ 2017 ຜ່ານມາ; 2). ລາຍງານການຈັດຕັ້ງປະຕິບັດແຜນໂຄງການລົງທຶນຂອງລັດ, ໂຄງການ ODA, ໂຄງການ FDA; 3). ການຈັດຕັ້ງປະຕິບັດ ແລະ ແຜນສູ້ຊົນງົບປະມານປີ 2018; 4). ສະພາບລະບົບໄຟຟ້າສາທາລະນະ (ໄຟເບືອງທາງ) ທີ່ຕິດພັນກັບລາຍຈ່າຍງົບປະມານ, ວຽກພະລັງງານທົດແທນພາຍໃນແຂວງ; 5). ຜ່ານຮ່າງບົດແນະນຳການຄຸ້ມຄອງ ແລະ ນຳໃຊ້ທີ່ດິນ; 6). ລາຍງານສະພາບໂຮງຮຽນຢູ່ຂັ້ນບ້ານ (ຂໍ້ສະດວກ, ຂໍ້ຫຍຸ້ງຍາກ); 7). ສະພາບການຕອບສະໜອງເລືອດ (ຂໍ້ສະດວກ, ຂໍ້ຫຍຸ້ງຍາກ).

ກອງປະຊຸມໄດ້ດຳເນີນຕາມວາລະ 7 ຫົວຂໍ້, ມີການການປະກອບຄຳເຫັນຂອງຜູ້ແທນ ແລະ ຄຳເຈາະຈີ້ມຂອງທ່ານປະທານ ພ້ອມທັງໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດໃນແຕ່ລະບັນຫາ ເພື່ອຄວາມເຂົ້າໃຈເປັນເອກະພາບ ໂດຍສະເພາະທີ່ກຳລັງປະເຊີນກັບບັນຫາດ້ານການເງິນງົບປະມານ ແລະ ໜີ້ສິນທີ່ຍັງຄ້າງຈ່າຍ ເພື່ອແກ້ໄຂຄວາມຕ້ອງການທີ່ຈຳເປັນຂອງບັນດາຂະແໜງການ, ບັນຫາສິ່ງທ້າທາຍໃນການບັນລຸໃຫ້ເສດຖະກິດຂະຫຍາຍຕົວຕໍ່ເນື່ອງສະເລ່ຍ 10% ຕໍ່ປີ (2016-2020), ການເຂົ້າ-ອອກຂອງພົນລະເມືອງ ແລະ ຊາວຕ່າງປະເທດ, ການສ້າງຖານລາຍຮັບ ຍັງເຫັນວ່າແຂວງຍັງ

ບໍ່ທັນໄດ້ຈັດຕັ້ງປະຕິບັດຕາມລະບຽບກົດໝາຍທີ່ລັດວາງອອກຢ່າງເຄັ່ງຄັດ ເປັນຕົ້ນ: ການເກັບພາສີທີ່ດິນ, ການເກັບອາກອນຈາກການຂາຍໄມ້, ການເລັ່ງທວງໜີ້ສິນ ແລະ ອື່ນໆ, ລວມທັງແບບແຜນການການແກ້ໄຂວຽກງານທີ່ພາກສະໜາມ ເພື່ອໃຫ້ສຳເລັດຢ່າງຂາດຕົວ.

III. ຜ່ານການຄົ້ນຄວ້າປຶກສາຫາລື ແລະ ການປະກອບຄວາມຄິດຄວາມເຫັນ ຢ່າງກົງໄປກົງມາ, ຈຶ່ງໄດ້ມີຄວາມເປັນເອກະພາບກັນ ສືບຕໍ່ຈັດຕັ້ງປະຕິບັດ ແລະ ແກ້ໄຂໃນຕໍ່ໜ້າ ດັ່ງມີລາຍລະອຽດ ດັ່ງນີ້:

1. ບັນດາໂຄງການລົງທຶນຂອງລັດ, ໂຄງການ ODA, ໂຄງການ FDA:

- ໃຫ້ແຕ່ລະພາກສ່ວນສ້າງແຜນການລົງທຶນຂອງລັດປີ 2018 ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຖ້າຫາກວ່າສຳເລັດແລ້ວ ສົ່ງໃຫ້ພະແນກແຜນການ ແລະ ການລົງທຶນແຂວງ ກ່ອນວັນທີ 15/6/2017.
- ບັນດາໂຄງການໃດທີ່ໄດ້ຮັບທຶນຊ່ວຍເຫຼືອລ້າຈາກຕ່າງປະເທດ, ຊຶ່ງມີທຶນພາຍໃນສົມທົບສ່ວນໃດໜຶ່ງ ມອບໃຫ້ພະແນກແຜນການ ແລະ ການລົງທຶນແຂວງຕ້ອງຈັດເປັນບູລິມະສິດ ເພື່ອສົມທົບ ແລ້ວນຳເຂົ້າແຜນໃຫ້ທ່ວງທັນ; ພ້ອມດຽວກັນນີ້ ກໍໃຫ້ເນັ້ນປະຕິບັດແຜນເກົ່າບັນດາໂຄງການທີ່ສະພາທ້ອງຖິ່ນໄດ້ຮັບຮອງເອົາແລ້ວນັ້ນ ເຊັ່ນ: ທາງພູຍາງ, ຂົວເຊປຽນ, ທາງໜອງມ່ວງມັດກາ, ຫ້ວຍສະມອງ ແລະ ອື່ນໆ.
- ໃຫ້ພະແນກແຜນການ ແລະ ການລົງທຶນແຂວງ ສະຫຼຸບລາຍງານແຜນການຈະເລີນເຕີບໂຕເສດຖະກິດຄາດໝາຍສູ້ຊົນແຕ່ລະປີບໍ່ໃຫ້ຫຼຸດ 10% ຕໍ່ປີ (ໄລຍະ 5 ປີ 2016-2020) ໃຫ້ແຂວງເປັນປະຈຳແຕ່ລະເດືອນ.

2. ສະພາບລະບົບໄຟຟ້າສາທາລະນະ (ໄຟເບື້ອງທາງ) ທີ່ຕິດພັນກັບລາຍຈ່າຍງົບປະມານ, ວຽກພະລັງງານທົດແທນພາຍໃນແຂວງ:

- ມອບໃຫ້ ພະແນກພະລັງງານ ແລະ ບໍ່ແຮ່ແຂວງ ສົມທົບກັບລັດວິສາຫະກິດໄຟຟ້າລາວ ເພື່ອກວດການຄືນໄຟຢູ່ແຕ່ລະຈຸດຄື: ບາງຈຸດຮຸ່ງ, ບາງຈຸດບໍ່ຮຸ່ງ, ກວດກາຄືນໄລຍະການຮຸ່ງຂອງເດືອນສັ້ນ-ເດືອນຍາວ ແຕ່ເດືອນໃດ ຫາ ເດືອນໃດ ໃນການຕັ້ງເປີດ-ປິດຂອງການໃຕ້ໄຟ, ເຮັດແນວໃດໃຫ້ຮຸ່ງສະໝ່ຳສະເໝີ ແລະ ເປັນການປະຫຍັດຂຶ້ນຕື່ມ; ສຳລັບການບູລະນະຮັກສາ ສ່ວນໃດສ່ວນໜຶ່ງ ແມ່ນໃຫ້ພະແນກພະລັງງານບໍ່ແຮ່ຈັດສັນທຶນເອງໃນການປົກປັກຮັກສາ, ແຕ່ຖ້າຫາກວ່າຫຼາຍກວ່າຄວາມສາມາດແມ່ນສະເໜີໃຫ້ສົມທົບກັບພະແນກແຜນການ-ການລົງທຶນ ເພື່ອນຳສະເໜີເຂົ້າແຜນ.
- ສຳລັບໂຄງການຍົກຍ້າຍລະບົບຕາຂ່າຍໄຟຟ້າ ອອກຈາກສະໜາມກິລາ ໜ້າສຳນັກງານອົງການປົກຄອງແຂວງນັ້ນ ມອບໃຫ້ພະແນກແຜນການ ແລະ ການລົງທຶນແຂວງຈັດສັນນຳເອົາເຂົ້າແຜນໃນປີ 2018.
- ປະຈຸບັນແຂວງອັດຕະປື ກຳລັງເປັນທີ່ສົນໃຈຂອງນັກລົງທຶນ ກ່ຽວກັບພະລັງງານແສງຕາເວັນຢູ່ແຂວງ; ດັ່ງນັ້ນ ສິ່ງທີ່ທ້າທາຍຄື ສະຖານທີ່ (ເປັນຕົ້ນ ດິນ ). ມອບໃຫ້ພະແນກພະລັງງານ ແລະ ບໍ່ແຮ່ແຂວງ ສົມທົບກັບພະແນກ ຊສ ແຂວງ, ພະແນກກະສິກຳປ່າໄມ້ແຂວງ ເພື່ອຈັດສັນລະອຽດຕື່ມດ້ວຍການຊອກຊ່ອງທາງຫາວິທີຫຼີກລ່ຽງຜົນກະທົບໃຫ້ນ້ອຍທີ່ສຸດ.

3. ຮ່າງບົດແນະນໍາການຄຸ້ມຄອງ ແລະ ນໍາໃຊ້ທີ່ດິນ: ຜ່ານມາເຫັນວ່າແຂວງພວກເຮົາກໍານົດ ແລະ ການຜັນຂະຫຍາຍຈາກກົດໝາຍທີ່ຂັ້ນເທິງວາງອອກ ແມ່ນປະຊາຊົນເຂົ້າໃຈຍາກ, ດັ່ງນັ້ນ ໃຫ້ປັບໂຄງໃໝ່ມີເນື້ອໃນທີ່ເຂົ້າໃຈງ່າຍ ແລະ ກະທັດຮັດ, ແຕ່ປະຕິບັດຕ້ອງ (ບໍ່ໃຫ້ນອກເໜືອຈາກກົດໝາຍທີ່ຂັ້ນເທິງວາງອອກ) ເພື່ອສາມາດປະຕິບັດໄດ້ໂດຍຄໍານຶງເຖິງປະຊາຊົນຂັ້ນຮາກຖານ ໃນການເສຍຄ່າບໍລິການຕ່າງໆ.

- ໃຫ້ຜູ້ແທນກອງປະຊຸມ ສົ່ງຄໍາເຫັນໃຫ້ກອງເລຂາ ພາຍໃນ 1 ທິດ ເພື່ອຂຸ້ນຂ້ຽວປັບປຸງ.

➢ ສໍາລັບສະພາບຂອງໂຮງຮຽນຢູ່ຂັ້ນບ້ານ ແລະ ສະພາບການຕອບສະໜອງເລືອດຜ່ານມາ ເຫັນວ່າສອງບັນຫານີ້ຍັງສາມາດປະຄັບປະຄອງໄປໄດ້, ແຕ່ໃຫ້ເອົາໃຈໃສ່ ດັ່ງນີ້: ເອົາໃຈໃສ່ປົກປັກຮັກສາໂຮງຮຽນ, ສ້າງສະພາບແວດລ້ອມຂອງໂຮງຮຽນ ໃຫ້ສະອາດສວຍງາມ ແລະ ດັດສົມພະນັກງານຄູໃຫ້ເໝາະສົມ. ບັນຫາການບໍລິຈາກເລືອດ ໃຫ້ສົມທົບກັບພາກ ສ່ວນກ່ຽວຂ້ອງສືບຕໍ່ຈັດຕັ້ງປະຕິບັດ ໃຫ້ໄດ້ດີຂຶ້ນກວ່າເກົ່າ, ໂດຍນໍາໃຊ້ງົບປະມານຂອງຕົນ ຢ່າງມີການປະຢັດ ແລະ ລະດົມການມີສ່ວນຮ່ວມຂອງສັງຄົມໃຫ້ກວ້າງຂວາງ, ຖ້າຫາກວ່າເກີດມີສະພາບທີ່ຈໍາເປັນແທ້ໆ ງົບປະມານບໍ່ພຽງພໍ ແຂວງຈະລະດົມ ແລະ ພິຈາລະນາງົບປະມານຊ່ວຍໜູນສ່ວນໃດສ່ວນໜຶ່ງ ຕາມຄວາມສາມາດຕົວຈິງ.

## IV. ວຽກສືບຕໍ່ປະຈໍາເດືອນ 5 ປີ 2017:

1. ສຸມໃສ່ການຍາດແຍ່ງສົ່ງເສີມການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ເພື່ອກະຕຸກຊຸກຍູ້ເສດຖະກິດ ແລະ ສົ່ງເສີມການຜະລິດພາຍໃນ ເພື່ອໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້ 10% ຕໍ່ປີ (ໄລຍະ 5 ປີ 2016-2020) ແລະ ສືບຕໍ່ປະຕິບັດຕາມແນວທາງ 8 ນະໂຍບາຍຂອງຂອງລັດຖະບານ.
2. ເອົາໃຈໃສ່ຄຸ້ມຄອງການໃຊ້ຈ່າຍງົບປະມານບໍລິຫານຂອງຕົນໃຫ້ລະມັດລະວັງ, ປະຫຍັດ, ໃຊ້ໃຫ້ຖືກທີ່, ຖືກເວລາ; ເນື່ອງຈາກວ່າແຂວງບໍ່ມີງົບຮ່ວງໃດທີ່ສະໜອງໃຫ້ຕາມຄວາມຕ້ອງການຄືຜ່ານມາ.
3. ສືບຕໍ່ສໍາຫຼວດມອບດິນ-ມອບປ່າໃຫ້ປະຊາຊົນໃຫ້ໄວຂຶ້ນຕື່ມ, ຊຶ່ງຕິດພັນກັບການເກັບລາຍຮັບເຂົ້າງົບປະມານ, ການຫັນປ່ຽນດິນຂອງປະຊາຊົນໃຫ້ພາກທຸລະກິດເຊົ່າທໍາການຜະລິດ ເປັນຕົ້ນ: ການປູກອ້ອຍຕ່າງໆ.
4. ສືບຕໍ່ປະຕິບັດຕາມດໍາລັດ ສະບັບເລກທີ 03/ນຍ ກ່ຽວກັບລະບຽບການຄຸ້ມຄອງຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ການເຊົ່າ, ຊື້-ຂາຍດິນຂອງຄົນລາວກັບຄົນຕ່າງປະເທດ ເພື່ອມາຜັນຂະຫຍາຍເປັນຄໍາສັ່ງແນະນໍາຂອງເຈົ້າແຂວງເພື່ອຈັດຕັ້ງປະຕິບັດ.
5. ມອບໃຫ້ພະແນກພະລັງງານ ແລະ ບໍ່ແຮ່ແຂວງລາຍງານໄປຍັງກະຊວງ ພະລັງງານ ແລະ ບໍ່ແຮ່ ເພື່ອຮັບຊາບຕື່ມກ່ຽວກັບທີ່ແຂວງໄດ້ອະນຸມັດທຶນຈໍານວນນຶ່ງອອກກ່ອນເຂົ້າໃນການປົກປັກຮັກສາເຂດບໍ່ຫີນໃໝ່ ຊຶ່ງມາຮອດປະຈຸບັນງົບປະມານດັ່ງກ່າວແມ່ນໄດ້ນໍາໃຊ້ໝົດແລ້ວ ແລະ ແຂວງແມ່ນບໍ່ມີຮ່ວງໃດທີ່ສາມາດອະນຸມັດໃຫ້ມາສືບຕໍ່ປົກປັກຮັກສາ. ພ້ອມກັນນີ້ ມອບໃຫ້ຫ້ອງວ່າການແຂວງສົມທົບກັບພາກສ່ວນກ່ຽວຂ້ອງຂອງແຂວງ ເພື່ອສືບຕໍ່ຂຶ້ນແຜນປົກປັກຮັກສາ, ຫຼັງຈາກນັ້ນໃຫ້ຮ່າງໜັງສືສະເໜີຫາສູນກາງ.
6. ມອບໃຫ້ພະແນກພະລັງງານ ແລະ ບໍ່ແຮ່ແຂວງ ສືບຕໍ່ເລັ່ງທວງໜີ້ຄ່າພັນທະຊ່ວຍແຂວງຂອງບໍລິສັດຂຸດຄົ້ນແຮ່ຄໍາຂອງບໍລິສັດ ແອັດສະມິງ ຕາມທີ່ໄດ້ລະບຸກັນໄວ້ໃນສັນຍາເບື້ອງຕົ້ນ.

7. ກ່ຽວກັບການຍົກຍ້າຍເມືອງພູວົງ ມອບໃຫ້ພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ ສົມທົບກັບເມືອງພູວົງ ທົບທວນຄືນໃໝ່ເປັນຕົ້ນ ການອອກແບບ-ການຈັດວາງບັນດາ ຫ້ອງການ, ອາຄານສະຖານທີ່ຕ່າງໆ ຫຼັງຈາກນັ້ນໃຫ້ຂຶ້ນແຜນ ເພື່ອສະເໜີຫາລັດຖະບານ.
8. ສືບຕໍ່ເລັ່ງລັດປົກປັກຮັກສາ ແລະ ແກ້ໄຂບັນຫາຊາຍແດນ ເປັນຕົ້ນ ແມ່ນການລັກລອບໄມ້ ແລະ ຫີນ; ພ້ອມກັນນີ້ກໍໃຫ້ລົງແກ້ໄຂສະພາບຢູ່ເມືອງ, ບ້ານ ແລະ ຈຸດອື່ນໆ ດ້ວຍວິທີການແກ້ໄຂ ໃຫ້ໄດ້ຢ່າງເດັດຂາດຢູ່ຈຸດນັ້ນໆ ( ລະອຽດ ແມ່ນປະຕິບັດຕາມການຊີ້ນຳໃນເດືອນຜ່ານມາ ).

ກອງປະຊຸມວົງການປົກຄອງແຂວງປະຈຳເດືອນ 4 ປີ 2017 ໄດ້ດຳເນີນເປັນເວລາ 1 ວັນເຕັມ, ມາຮອດ ເວລາ 16:00 ໂມງ ກອງປະຊຸມກໍ່ໄດ້ປິດລົງຢ່າງເປັນທາງການ.

ປະທານກອງປະຊຸມ

ປອ ນາມ ວິນະເທດ

ຜູ້ບັນທຶກກອງປະຊຸມ

ວົງໄຊ ມະນີວົງ



/